## ສະບາຍດີ...

- ທາງສູນບໍຣິການສຸຂພາບແມ່ຍິງຂອງເມືອງ Liverpool ຂໍຕ້ອນຮັບດ້ວຍຄວາມຍິນດີ, ນີ້ແມ່ນບ່ອນບໍຣິການຢູ່ຕາມຊຸມຊົນ ທີ່ດຳເນີນດ້ວຍແມ່ຍິງໃຫ້ສຳລັບແມ່ຍິງ.
- ຍິນດີຕ້ອນຮັບແມ່ຍິງທຸກໆຂັ້ນອາຍຸແລະວັທະນະທຳ - ແມ່ຍິງທີ່ຍັງໜຸ່ມ, ແມ່ຍິງທີ່ເຖົ້າແກ່ແລ້ວ, ແມ່ຍິງໂສດທີ່ມີລູກ, ແມ່ຍິງທີ່ມາຕັ້ງຖິ່ນຖານໃໝ່, ແມ່ຍິງພື້ນເມືອງອາບໍຣິຈິໂນລ໌, ແມ່ຍິງກະເທີຍ, ແມ່ຍິງບໍ່ສົມບູນຕ່າງໆ.
- ພວກເຮົາເຊື່ອວ່າ ແມ່ຍິງທຸກຄົນມີສິດຕັດສິນໃຈໃນເຣື່ອງທີ່ເຂົ້າໃຈລາຍລະອຽດດີ ດ້ວຍຕົນເອງໄດ້ ກ່ຽວກັບສຸຂພາບແລະຊີວິດຂອງພວກເຂົາ.
- ມີກຸ່ມແມ່ຍິງທີ່ໄດ້ຜ່ານການຝຶກຫັດມາ ແລະມີຄວາມຊຳນິຊຳນານຫຼາຍຢ່າງ ຮັບຜິດຊອບຄວາມຕ້ອງການໃນການຮັກສາສຸຂພາບຂອງທ່ານ.
- ພະນັກງານຂອງພວກເຮົາມີເບື້ອງຫຼັງມາຈາກວັທະນະທຳຕ່າງໆ. ບາງຄົນກໍປາກສອງພາສາໄດ້ ແລະອາດສາມາດຊ່ວຍໄດ້ຖ້າທ່ານມີຄວາມລຳບາກກັບພາສາອັງກິດ.
- ຖ້າວ່າບໍ່ມີສະມາຊິກຂອງພະນັກງານຮັບໃຊ້ ປາກພາສາຂອງທ່ານ ກໍຈະໄດ້ຈັດຫາການຊ່ວຍເຫຼືອຂອງນາຍພາສາ.
- *ຕັ້ງແຕ່ເປີດມາໃນປີ 1975, ສູນບໍຣິການສຸຂພາບແມ່ຍິງຂອງເມືອງ Liverpool ໄດ້ຊ່ວຍແມ່ຍິງຫຼາຍພັນຄົນເຮັດໃຫ້ສຸຂພາບແລະການຢູ່ສະບາຍຂອງພວກເຂົາດີຂຶ້ນ.*

ພວກເຮົາຫວັງວ່າຈະສາມາດຊ່ວຍທ່ານໄດ້ເໝືອນກັນ.

## ຈະຊອກພວກເຮົາຢູ່ບ່ອນໃດ...




**ໂທລະສັບເຮັດການນັດໝາຍ**

(02) 9601 3555

ຊົ່ວໂມງ: 9 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ - ວັນສຸກ
ຊົ່ວໂມງນອກເວລາແມ່ນໄດ້ນັດເອົາ

This service is funded by the NSW Health Department through the South Western Sydney Area Health Service

# ສູນບໍຣິການສຸຂພາບແມ່ຍິງຂອງເມືອງ Liverpool

# LIVERPOOL WOMEN'S HEALTH CENTRE




***in women's hands***


**26 Bathurst Street**
**Liverpool NSW 2170**
Corner of Campbell and Bathurst Streets

**ໂທລະສັບ:** (02) 9601 3555
**ສານ ແຟກສ໌:** (02) 9824 0448


**LAO**

# ບໍຣິການຕ່າງໆທີ່ພວກເຮົາຮັບໃຊ້...

- ໃຫ້ການປຶກສາສ່ວນຕົວບຸກຄົນເລື່ອງທາງການແພດ ແລະວິທີທາງການແພດໃນຂອບເຂດເລື່ອງການຄຸມກຳເນີດ, ຄຳແນະນຳໃນການຖືພາ, ການກວດ Pap (ແພປ໌) ເບິ່ງມະເລັງມົດລູກ, ການກວດເບິ່ງມະເລັງເຕົ້ານົມ, ຄວາມເຄັ່ງຕຶງຕ່ອນເວລາກ່ອນເປັນລະດູ, ການໝົດລະດູການຂອງແມ່ຍິງ, ພະຍາດຊ່ອງຄອດ, ເຊື້ອໂລກທາງເພດ STDs & ໂລກແອດສ໌ HIV/AIDS.
- ໃຫ້ການປຶກສາການໃຊ້ຢາທຳມະຊາດພື້ນເມືອງ/ໃຊ້ຢາໜ້ອຍລົງ ໃນທຸກຂອບເຂດຂອງເລື່ອງສຸຂພາບແມ່ຍິງ.
- ບໍຣິການບີດນວດເສັ້ນປະສາດສັນຫຼັງ.
- ການປິ່ນປົວດ້ວຍການບີບນວດ
- ໃຫ້ການປຶກສາສ່ວນຕົວບຸກຄົນ - ບັນຫາຈິດໃຈ, ຄວາມສຳພັນ, ລ່ວງເກີນທາງເພດ, ຄວາມຮຸນແຮງ, ອື່ນໆ.
- ການຊ່ວຍເຫຼືອເລື່ອງຂື້ນສານສຳລັບແມ່ຍິງທີ່ກຳລັງໄດ້ຮັບຄວາມລຳບາກເລື່ອງຄວາມຮຸນແຮງພາຍໃນຄອບຄົວ.
- ການຊ່ວຍເຫຼືອຕ່າງໆສຳລັບແມ່ຍິງທີ່ມາຕັ້ງຖິ່ນຖານໃໝ່ ແລະແມ່ຍິງພື້ນເມືອງ ອາບໍຣິຈີໄນລ໌.
- ມີໝວດສິດສອນ ແລະຊ່ວຍເຫຼືອສຳລັບບັນຫາສຸຂພາບຕ່າງໆຂອງແມ່ຍິງ ຮ່ວມທັງຄວາມຮຸນແຮງພາຍໃນຄອບຄົວ, ຈິດໃຈເມື່ອຍ, ກັງວົນ, ເຊື່ອມັ່ນໃນຕົວເອງ, ໝົດລະດູ, ສຸຂພາບແມ່ຍິງເຖົ້າແກ່, ເສົ້າໂສກສູນເສັຽ, ອື່ນໆ.
- ການສອນສະມາທິ Yoga ແລະການຜ່ອນໃຈມີປະຈຳ.
- ລາຍລະອຽດ, ຄຳແນະນຳແລະການສົ່ງໄປຂໍຄວາມເຫັນກ່ຽວກັບເລື່ອງທີ່ແມ່ຍິງເປັນຫ່ວງ.

# ເລື່ອງຄ່າຈ້າງ...

- ການປຶກສາເລື່ອງສຸຂພາບແລະການກວດເບິ່ງເຊື້ອໂລກແມ່ນຄິດຄ່ານຳຫ້ອງການສຸຂພາບລັດເສັຽ.
- ມີການຄິດຄ່າໜ້ອຍໜຶ່ງສຳລັບບໍຣິການເລື່ອງຢາທຳມະຊາດ, ບີດນວດສັນຫຼັງແລະການນວດຮ່າງກາຍຕ່າງໆ. ຍ້ອນຄວາມຕ້ອງການບໍຣິການນີ້ຫຼວງຫຼາຍ, ໄດ້ມີການເລືອກເອົາແມ່ຍິງທີ່ບໍ່ສາມາດເສັຽບ່ອນເອກະຊົນກ່ອນ.
- ການບໍຣິການຢ່າງອື່ນແມ່ນບໍ່ມີການຄິດຄ່າ, ຫຼືວ່າຂໍການບໍຣິຈາກເຫຼັກນ້ອຍ.
- ຈະບໍ່ມີການປະຕິເສດແມ່ຍິງຜູ້ໃດ ດ້ວຍເຫດຜົນວ່າພວກເຂົາບໍ່ສາມາດເສັຽຄ່າໄດ້.

# ສິດແລະຄວາມຮັບຜິດຊອບຕ່າງໆ ຂອງແມ່ຍິງທີ່ໃຊ້ບໍຣິການພວກເຮົາ

ຖານແມ່ນແມ່ຍິງຜູ້ນຶ່ງໃຊ້ບໍຣິການຕ່າງໆຂອງພວກເຮົາ ທ່ານຈະໄດ້ຮັບການຊ່ວຍເຫຼືອປ້ອງກັນຜົນປະໂຍດຂອງທ່ານ ແລະການຊ່ວຍເຫຼືອໃຫ້ຕັດສິນໃຈໄດ້ຢ່າງລະອຽດດີ ກ່ຽວກັບສຸຂະພາບແລະການຢູ່ດີຂອງທ່ານ.
ສິດບາງຢ່າງຂອງທ່ານແມ່ນໄດ້ຮັບການຮັບຮອງຈາກກົດໝາຍ, ຢ່າງອື່ນແມ່ນມີການຮັບຮູ້ໃນຊຸມຊົນຂອງພວກເຮົາຕາມທຳມະດາ.

*ທ່ານມີສິດທີ່ຈະ:*

- ໄດ້ຮັບການຕ້ອນຮັບຢ່າງມີມາລະຍາດແລະຄວາມນັບຖື ໄດ້ຮັບລາຍລະອຽດຢ່າງແຈ່ມແຈ້ງດີກ່ຽວກັບການຮັກສາ
- ສຸຂະພາບຂອງທ່ານ ໃຊ້ຄຳເວົ້າທີ່ເຂົ້າໃຈໄດ້ງ່າຍດີ.
- ໄດ້ຮັບການຮັກສາປ້ອງກັນເລື່ອງສ່ວນຕົວແລະເລື່ອງຄວາມລັບພາຍໃນສູນນັ້ນ.
- ຍອມຮັບຫຼືປະຕິເສດບໍຣິການຕ່າງໆທີ່ພວກເຮົາສເນີໃຫ້.
- ໃຊ້ບ່ອນບໍຣິການນາຍພາສາ
- ອ່ານສະບັບໜັງສືຂອງທ່ານເວລາໃດກໍ່ໄດ້ ແລະຕື່ມລາຍລະອຽດແລະຄວາມຄິດເຫັນໃສ່ໄດ້
- ໃຫ້ຄວາມຄິດເຫັນຫຼືຄຳແນະນຳກ່ຽວກັບບໍຣິການເຮົາ
- ເຮັດການຕໍ່ວ່າກ່ຽວກັບບໍຣິການນີ້ ແລະໄດ້ຮັບແກ້ໄຂໄວແລະຢ່າງຍຸຕິທຳ.

*ທ່ານມີຄວາມຮັບຜິດຊອບ:*

- ທີ່ຈະຕ້ອງໃຫ້ລາຍລະອຽດທີ່ກົງກັນ ອັນທີ່ຈະຊ່ວຍໃນການຮັກສາສຸຂະພາບຂອງທ່ານ
- ທີ່ຈະຕ້ອງໄປຕາມນັດໝາຍ ຫຼືວ່າຕິດຕໍ່ຫາທາງບໍຣິການຖ້າວ່າບໍ່ສາມາດໄປໄດ້
- ທີ່ຈະຕ້ອງແຈ້ງພະນັກງານສຸຂພາບໃຫ້ຮູ້ ຖ້າວ່າທ່ານກຳລັງໄປຫາຜູ້ອື່ນກ່ຽວກັບບັນຫາອັນດຽວກັນ.
- ທີ່ຈະຕ້ອງຍອມຮັບຜົນຂອງການຕັດສິນໃຈຂອງທ່ານ
- ກ່ຽວກັບການຮັກສາສຸຂະພາບຂອງທ່ານ ຮັບຮູ້ແລະນັບຖືສິດຕ່າງໆຂອງຄົນອື່ນໃນສູນນັ້ນ
- ແຈ້ງທາງສູນນັ້ນຖ້າວ່າທ່ານມີຄວາມບໍ່ພໍໃຈກ່ຽວກັບທາງບໍຣິການນັ້ນ **ແລະ**ກະລຸນາບອກໃຫ້ພວກເຮົາຮູ້ ຖ້າວ່າທ່ານພໍໃຈກັບການບໍຣິການຂອງພວກເຮົາ.

**ພວກເຮົາມີສິດກຳນົດການບໍຣິການທີ່ມີຮັບໃຊ້ນັ້ນ ຕາມພື້ນຖານຂອງການຕັດສິນໃຈຂອງນັກອາຊີບ, ບໍຣິການມີຮັບໃຊ້ຫຼືບໍ່ ຫຼືວ່າດ້ວຍຄວາມປອດໄພຂອງພະນັກງານແລະຜູ້ມາໃຊ້ບໍຣິການນີ້.**